SDCS San Diego City Schools
Fact Sheet
ລະດູໃບໄມ້ລົ່ນ 2005

# ຂັ້ນມາຕຖານຂອງຣັຖຄາລິຟເນັຍ

ເພື່ອຊຸກຍູ້ໃຫ້ນັກຮຽນທຸກໆຄົນບັນລຸຜົນສຳເຣັດຂັ້ນສູງສຸດນັ້ນ, ໂຮງຮຽນສູນກາງສຶກສາ (SDCS)ໄດ້ນຳໃຊ້ເນື້ອໃນຂັ້ນມາຕຖານຂອງກະຊວງສຶກສາຣັຖຄາລິຟເນັຍ (CDE), ຊຶ່ງແຈ້ງກ່ຽວກັບຄວາມຮູ້, ແນວຄິດ ແລະ ຄວາມສາມາດທີ່ພວກນັກຮຽນຕ້ອງໄດ້ຮຽນເອົາໃນແຕ່ລະຊັ້ນຮຽນ. ປື້ມຄູ່ມືສຳຫລັບພໍ່ແມ່ນັກຮຽນຈັດອອກສຳຫລັບຊ່ອຍໃຫ້ພໍ່ແມ່ເຂົ້າໃຈໃນການໃຊ້ຂັ້ນມາຕຖານຢູ່ໃນໂຮງຮຽນຂອງພວກເຮົາ, ຊຶ່ງມີໃຫ້ທ່ານອ່ານຢູ່ທີ່ຕາໜ່າງຂ່າວຂອງກະຊວງສຶກສາທີ່: http://www.cde.ca.gov/ls/pf/pf/.

ຂັ້ນມາຕຖານສຳຄັນຂອງຣັຖນີ້ແມ່ນເນື້ອໃນທີ່ພວກນັກຮຽນຕ້ອງໄດ້ຮຽນໃນແຕ່ລະຊັ້ນຮຽນ (K-12) ໃນວິຊາດັ່ງຕໍ່ລົງໄປນີ້:

- ອັກສອນສາດພາສາອັງກິດ (Eglish Language Arts).
- ຄະນິດສາດ (Mathematics).
- ປວັດສາດ–ສັງຄົມວິທຍາ (History-Social Science).
- ວິທຍາສາດ (Science).
- ສິລປະກັມ ແລະ ສິລປະການສະແດງ: ເຕັ້ນລຳ, ດົນຕຣີ, ການລະຄອນ ແລະ ການສິລປະກັມຕ່າງໆ (Visual and Performing Arts: Dance, Music, Theatre and Visual Arts).
- ການຈເຣີນເຕີບໂຕຂອງພາສາອັງກິດ (English Language Development).
- ພາລະສຶກສາ (Physical Education).

ສຳຫລັບເຂດວິຊາຂັ້ນມາຕຖານທີ່ຍັງບໍ່ທັນກວາມໄປທົ່ວຣັຖ, ຮວມມີ ການສຶກສາກ່ຽວກັບສຸຂພາບແລະ ພາສາບານາຊາດ/ພາສາຂອງໂລກ, ຊຶ່ງແມ່ນຜແນກການຂັ້ນມາຕຖານຂອງສູນກາງສຶກສາ, ຜແນກສຳຣວດສອບເສັງ, ແລະຜແນກການຮັບຜິດຊອບ ໄດ້ເຮັດວຽກກັບນັກຊ່ຽວຊານດ້ານຫລັກສູດ, ພະນັກງານປົກຄອງໂຮງຮຽນ, ພໍ່ແມ່ນັກຮຽນ, ແລະ ຊຸມຊົນ ເພື່ອປັບປຸງເນື້ອໃນຂັ້ນມາຕຖານຂອງສູນກາງໃຫ້ຖືກຕ້ອງກັນກັບໂຄງຮ່າງຂອງຣັຖ.

## ຂໍ້ສລູບ

- ❖ ຂັ້ນມາຕຖານຂອງກະຊວງສຶກສາຣັຖຄາລິຟເນັຍ (CDE) ແຈ້ງເຖິງຄວາມຮູ້, ແນວຄິດ ແລະ ຄວາມສາມາດທີ່ພວກນັກຮຽນຕ້ອງໄດ້ຮຽນໃນແຕ່ລະດັບຊັ້ນຮຽນ.
- ❖ ຖືກຈັດແຕ່ງຂຶ້ນສຳຫລັບພວກນັກຮຽນທຸກໆຄົນ ຍົກເວັ້ນພວກທີ່ເປັນພິການ, ເພື່ອຈະສາມາດຮຽນສຳເຣັດໄດ້, ໃຫ້ເວລາພຽງພໍ.
- ❖ ພວກນັກຮຽນຈະຖືກສອບເສັງໃນຂອບເຂດຂັ້ນມາຕຖານຕາມການສອບເສັງຂອງຣັຖບັງໄວ້.
- ❖ ໂດຍການຮັບເອົາຂັ້ນມາຕຖານຂອງຣັຖມາໃຊ້ນັ້ນ, ສູນກາງສຶກສາໄດ້ຊຸກຍູ້ສນັບສນຸນຄວາມຕັ້ງຂອງເຂົາເຈົ້າເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນໃຫ້ດີຂຶ້ນແລະໃຫ້ເຖິງຂັ້ນດີເລີດ.

ເນື້ອໃນການຮຽນນີ້ແມ່ນແຕ່ງຂຶ້ນໃຫ້ຖືກກັບພວກນັກຮຽນທຸກຄົນ, ແລະ ຄາດໝາຍໄວ້, ໃຫ້ມີເວລາພຽງພໍ, ສຳຫລັບນັກຮຽນທຸກຄົນ, ຍົກເວັ້ນນັກຮຽນພິການສ່ວນນ້ອຍ ເພື່ອຈະໃຫ້ມີຄວາມສາມາດບັນລຸຜົນໄດ້. ລາຍລະອຽດສະເພາະເຈາະຈົງກ່ຽວກັບຂັ້ນມາຕຖານຂອງແຕ່ລະຊັ້ນຮຽນ ແລະ ແຕ່ລະວິຊາຮຽນນັ້ນ ມີໄວ້ໃຫ້ອ່ານຢູ່ທີ່ຕາໜ່າງຂ່າວຂອງກະຊວງສຶກສາຣັຖຄາລິຟເນັຍທີ່ http://www.cde.ca.gov/be/st/ss/.

ຫລັກສູດສູນກາງສຶກສາ, ການສຳຣວດລະດັບນັກຮຽນ, ປື້ມຮຽນ, ອຸປະກອນການສອນ, ແລະ ກິຈກັມຕ່າງໆທີ່ນັກວິຊາການແຕ່ງຂຶ້ນລ້ວນແລ້ວແຕ່ ຖືກຕ້ອງເໝາະສົມກັບຂັ້ນມາຕຖານ. ນີ້ເປັນສິ່ງຮັບປະກັນຮວມທັງຜົນປະໂຍດອື່ນໆ, ທີ່ພວກນັກຮຽນໄດ້ຮຽນຮູ້ຢູ່ໃນຫ້ອງຮຽນ ແມ່ນມີສ່ວນກ່ຽວຂ້ອງໂດຍກົງກັບການສອບເສັງທົ່ວຣັຖທີ່ເຂົາເຈົ້າສອບເສັງແຕ່ລະປີ. ການສອບເສັງທີ່ຣັຖບັງອອກນັ້ນ ແມ່ນເພື່ອວັດແທກການຮຽນຂອງພວກນັກຮຽນຊຶ່ງກ່ຽວຂ້ອງກັບການຄາດໝາຍຂອງຂັ້ນມາຕຖານຕ່າງໆ. ລາຍລະອຽດເພີ້ມເຕີມກ່ຽວກັບການສອບຂອງພວກນັກຮຽນນັ້ນມີໄວ້ໃນຕາໜ່າງຂ່າວຂອງສູນກາງສຶກສາທີ່ http://www.sandi.net/indices/testscores.html.

ຂັ້ນມາຕຖານນີ້ຮັບປະກັນໃຫ້ສູນກາງສຶກສາແຊນດິເອໂກ (SDCS), ພ້ອມກັບໂຮງຮຽນໃນທົ່ວເຂດຣັຖ, ໃຫ້ມີໂຄງການສຶກສາທີ່ມີຄຸນນະພາບສູງ. ຂັ້ນມາຕຖານໄດ້ໃຫ້ຄຳຕອບວ່າ "ເດັກຂອງຂ້າພະເຈົ້າຕ້ອງໄດ້ຮຽນຫຍັງແດ່?" ດ້ວຍການວັດແທກສະເພາະເຈາະຈົງໃສ່ຄວາມຮູ້, ແນວຄິດ ແລະ ຄວາມສາມາດຂອງນັກຮຽນແຕ່ລະຄົນ. ໂດຍຜ່ານຂັ້ນມາຕຖານນີ້, ສູນກາງສຶກສາສາມາດໃຫ້ການຊຸກຍູ້ສນັບສນຸນຄວາມຕັ້ງໃຈຂອງເຂົາເຈົ້າ ເພື່ອປັບປຸງຄວາມສຳເຣັດ ແລະ ໃຫ້ເຖິງຂັ້ນດີເລີດໃນຂະນະທີ່ເຂົາເຈົ້າໃຊ້ລະບົບຫລັກສູດ ແລະ ຫລັກການສອບເສັງທີ່ເຂັ້ມງວດຢູ່ນັ້ນ. ລາຍລະອຽດເພີ້ມເຕີມ, ກະຣຸນາເຂົ້າອ່ານໃນຕາໜ່າງຂ່າວຜແນກຂັ້ນມາຕຖານ, ການສອບເສັງ ແລະການຮັບຜິດຊອບທີ່ http://www.studata.sandi.net/saa.

ເພື່ອລາຍລະອຽດຕິດຕໍ່ຫາ: **Standards, Assessment, and Accountability: (619) 725-7166**
**Media inquires: (619) 725-5578**

**www.sandi.net**
*revised 09/21/2005*

"ບໍຣິການຊ່ວຍເຫລືອນັກຮຽນຫລາຍກວ່າ 136,000 ຄົນ, ສູນກາງສຶກສາແຊນດິເອໂກເປັນສູນກາງໃຫຍ່ທີ່ສຸດທີສອງໃນຣັຖຄາລິຟເນັຍ, ມີໂຮງຮຽນຫລາຍກວ່າ 202 ແຫ່ງ ແລະ ມີພະນັກງານຫລາຍກວ່າ 14,500 ຄົນ ທີ່ທຽບເທົ່າຕຳແໜ່ງເຕັມເວລາ (ຊຶ່ງເປັນຕົວແທນໃຫ້ຈຳນວນພະນັກງານຫລາຍກວ່າ 15,800 ຄົນ.). ສູນກາງສຶກສາແຊນດິເອໂກໄດ້ປັບປຸງຄວາມສຳເຣັດຂອງນັກຮຽນໂດຍຜ່ານການເນັ້ນໜັກໃສ່ພື້ນຖານການສຶກສາດ້ານວິຊາອ່ານ, ວິຊາຂຽນ, ແລະ ວິຊາເລກແຕ່ຊັ້ນກຽມອະນຸບານເຖິງປີ 12. ສູນກາງສຶກສາໄດ້ຕັດສິນໃຈຊ່ວຍເຫລືອໂຮງຮຽນ ແລະ ສົ່ງເສີມໃຫ້ສະພາບແວດລ້ອມການຮຽນໂດຍປັບປຸງຕຶກອາຄານຂອງໂຮງຮຽນ ແລະ ວັດຖຸການຮຽນໃຫ້ທັນສໄມ ແລະ ດຳເນີນງານຜ່ານການພົວພັນພໍ່ແມ່, ຄຣູອາຈານ, ແລະ ຊຸມຊົນ."

ພາລະໜ້າທີ່ຂອງໂຮງຮຽນສູນກາງສຶກສາແຊນດິເອໂກແມ່ນເພື່ອປັບປຸງຄວາມສຳເຣັດຂອງພວກນັກຮຽນ ໂດຍຊຸກຍູ້ຊ່ວຍເຫລືອການສິດສອນ ແລະ ການຮ່ຳຮຽນຢູ່ໃນຫ້ອງຮຽນ.